ໂຄງການການສຶກສາເພື່ອຊ່ວຍຕົນເອງ

ຄວາມຮູ້ທ້ອງຖິ່ນ

# ການເຮັດນາປີ

( ສະບັບທົດລອງໃຊ້ )



ຂໍ້ມູນຈາກບ້ານສີວິໄລ

ເມືອງທຸລະຄົມ, ແຂວງວຽງຈັນ

ຂຽນໂດຍ: ອຈ ສົມບັດ ເພັງສະຫວັດ

2007

ຄວາມຮູ້ທ້ອງຖິ່ນ

# "ການປູກເຂົ້າ"

ຂໍ້ມູນຈາກບ້ານສີວິໄລ
ເມືອງທຸລະຄົມ, ແຂວງວຽງຈັນ

ຂຽນໂດຍ: **ອຈ ສົມບັດ ເພັງສະຫວັດ**
ຮຽບຮຽງໂດຍ: **ອຈ ທອງຂັນ ນ້ອຍມະນີວົງ**
**ອຈ ທົງທອງ ຜອງມະນີວົງ**
ພິມແລະຈັດໜ້າໜ້າໂດຍ: ນ. **ສຸກັນຍາ ສີວິໄຊ**
ແຕ້ມໂດຍ: ທ. **ສິດປະກອນ**

ເຈົ້າຂອງ: ຫ້ອງການສຶກສາເມືອງທຸລະຄົມ, ແຂວງວຽງຈັນແລະສູນອົບຮົມຮ່ວມພັດທະນາ
ອຸປະຖຳໂດຍ:
New Zealand Agency for International Development ( NZAID )

# ຄຳນຳ

ປຶ້ມເຫລັ້ມນີ້ເປັນຜົນງານການຊຸມຂອງຄູອາຈານ ແລະຊາວບ້ານໜອງນົກສີວິໄລ, ເມືອງທຸລະຄົມ, ແຂວງວຽງຈັນ ຊຶ່ງເປັນການຮັບໂຮມປະສົບການໃນການດຳລົງຊີວິດແບບເພິ່ງຕົນເອງ, ກຸ້ມຕົນເອງໂດຍອາໄສທຳມະຊາດ, ສິ່ງແວດລ້ອມອ້ອມຕົວແບບດັ້ງເດີມຕັ້ງແຕ່ດົນນານຈົນເຖິງປະຈຸບັນນີ້.

ປື້ມເຫລັ້ມນີ້ເປັນບ່ອນອີງໃຫ້ແກ່ຄູໃນການສຶກສາແນວຄວາມຄິດຮັກທຳມະຊາດ, ຮັກພູມປັນຍາກໍຄືວິຖີຊີວິດທ້ອງຖິ່ນໃຫ້ແກ່ເດັກເພື່ອສ້າງແນວຄິດຮັກທ້ອງຖິ່ນຂອງຕົນ.

ຄະນະຈັດທຳຄິດວ່າປື້ມເຫລັ້ມນີ້ເຊິ່ງເປັນສະບັບທົດລອງໃຊ້ ແລະຄົງເປັນປະໂຫຍດບໍ່ຫລາຍກໍໜ້ອຍໃຫ້ແກ່ຄູອາຈານໃນການສິດສອນເດັກແລະຄິດວ່າຍັງມີຫລາຍສິ່ງຫລາຍຢ່າງທີ່ຍັງຂາດຕົກບົກພ່ອງທີ່ພ້ອມຈະປັບປຸງປ່ຽນແປງຕາມຄວາມເໝາະສົມ

ຄະນະຈັດທຳ

## *ການເຮັດນາປີ*

ເຖິງລະດູເດືອນ 5ຕົ້ນປີໃໝ່ລາວຊາວນາພວກເຮົາກໍໄດ້ກະກຽມໄຖແລະຄາດເພື່ອທໍາການປູກເຂົ້າ, ກະກຽມຫຼັກຮົ້ວ, ຮາວຮົ້ວເພື່ອລ້ອມຕາກ້າ.

ເມື່ອຕົກຮອດເດືອນ 6 ຊາວນາໄດ້ກະກຽມດິນຕົກກ້າ, ກ່ອນຈະຕົກກ້າກໍຕ້ອງໄດ້ກຽມດິນໄວ້ໄຖຮຸດປະໄວ້.



( ຮູບດິນນາທີ່ກໍາລັງກະກຽມປູກເຂົ້າ )

ຕໍ່ມາກະກຽມເຂົ້າປູກເລືອກແນວພັນທີ່ດີ, ຕ້ອງ ເອົາເມັດເຂົ້າຕື່ງດີ, ບໍ່ຕິດເຊື້ອພະຍາດມາກ່ອນແລະບໍ່ປົນ ກັບແນວພັນອື່ນໆ.



ແນວເຂົ້າປູກ

ເຂົ້າປູກຕ້ອງແຊ່ນ້ຳ 2 ມື້ແລ້ວເອົາຂຶ້ນບົ່ມ 2 ມື້.



ເມື່ອຕົກກ້າໄຖຮຸດແລ້ວຕ້ອງໄດ້ໄຖຄົ້ນດິນຕື່ມອີກເທື່ອທີສອງ. ແຕ່ໃນເທື່ອນີ້ເຮົາຕ້ອງຄາດໃຫ້ແຫລກລະອຽດດີແລ້ວມອບຕາກ້າ.



ຄາດໃຫ້ລະອຽດກ່ອນມອບຕາກ້າ

ຈາກນັ້ນໃຫ້ເອົາເຂົ້າໄປຫວ່ານໃຫ້ສະໝ່ຳສະເໝີ ໃຫ້ພໍດີງາມ, ເມື່ອກ້າໃຫຍ່ຂຶ້ນໄດ້ປະມານ 15 ວັນແລ້ວກໍ່ຕ້ອງເອົາຝຸ່ນມາຫວ່ານໃສ່ຕາກ້າເພື່ອເຮັດໃຫ້ກ້າງາມແລະສູງດີ.



ຫວ່ານເຂົ້າໃຫ້ສະໝ່ຳສະເໝີ

ແຕ່ກ່ອນຈະເອົາກ້າໄປດຳໃສ່ນາເຮົາຕ້ອງໄດ້ໄຖຮຸດນາໄວ້ກ່ອນຖ້າກ້າໃຫ່ຍເມື່ອຈະດຳເຮົາຕ້ອງໄດ້ໄປໄຖຄືນຕື່ມອີກເທື່ອໜຶ່ງແລ້ວຈຶ່ງຄາດໃຫ້ແຫລກລະອຽດດີ.



ໄຖແລະຄາດກຽມດິນກ່ອນຈະດຳນາ

ເມື່ອກ້າມີອາຍຸເຖິງ 30 ວັນແລ້ວກໍເຖິງເວລາຫຼົກໄປດຳໃສ່ນາແລ້ວ



ກ້າອາຍຸ 30ວັນກໍເໝາະສົມກັບການດຳນາ

ຈາກນັ້ນເອົາກ້າໄປດໍາໃນໄລຍະຫ່າງແຕ່ລະຕົ້ນ ຫ່າງກັນປະມານ 15 – 20 ຊັງຕີແມັດ.




ໄລຍະຂອງຕົ້ນກ້າ

ເມື່ອດໍາໄດ້ປະມານ 15 ວັນ, ເຮົາຄວນເອົາປຸ໋ຍຊີວະພາບ ຫຼື ຝຸ່ນໄປຫວ່ານໃສ່ເພື່ອໃຫ້ມັນງາມ.

ຈາກນັ້ນເຮົາກໍ່ຕ້ອງບົວລະບັດຮັກສາບໍ່ໃຫ້ງົວຫຼືຄວາຍເຂົ້າໄປກິນ; ພ້ອມກັນນັ້ນເຮົາຕ້ອງໝັ່ນເສຍຫຍ້າໃນນາ ແລ້ວຖາງຄັນນາເຮັດແນວນັ້ນເພື່ອເຮັດໃຫ້ຕົ້ນເຂົ້າແປະຄັນນາໃຫ້ງາມແລະສູງພຽງໝູ່ຂອງມັນ.



ໄລຍະເຂົ້າດໍເລີ່ມຈະມານແມ່ນໃນໄລຍະເດືອນ 10 ພໍຮອດທ້າຍເດືອນ 10 ຕົ້ນເຂົ້າກໍຈະເລີ່ມຄ່ຽງ, ຈາກນັ້ນເມື່ອຮອດຕົ້ນເດືອນ 11 ລາວ ເຂົ້າປີຈະເລີ່ມມານພໍຕີກຮອດໄລຍະເດືອນ 12 ເຂົ້ານາປີແມ່ນເລີ່ມຄ່ຽງ



ເພີ່ນກໍຈະເລີ່ມກ່ຽວເຂົ້ານາປີໃນເດືອນ 12 - 1 ລາວແລ້ວເກັບກູ້ເອົາເຂົ້ານາປີໂຮມກອງເພື່ອປັ່ນຂຶ້ນເລົ້າ.



## ບົດເລກປໍ1.

1. ຕູ້ສີລາວປູກເຂົ້າມີສອງປະເພດຄື:ປູກເຂົ້າໜຽວ ແລະປູກເຂົ້າຈ້າວ.
   - ລາວປູກເຂົ້າຈ້າວ 10kg (ກິໂລກະຼາມ).
   - ລາວປູກເຂົ້າໜຽວ 12kg (ກິໂລກຼາມ).
   - ຖາມວ່າຕູ້ສີປູກເຂົ້າປີນີ້ໝົດເຂົ້າປູກຈັກກິໂລກຼາມ ? .

## ບົດເລກປໍ 2

1. ພໍ່ຕູ້ຄຳລາວໄດ້ເຮັດນາສອງບ່ອນ, ບ່ອນທີໜຶ່ງໄດ້ເຂົ້າ 1000 ກິໂລກຼາມແລະບ່ອນທີສອງໄດ້ເຂົ້າ 500 ກິໂລກຼາມ.
   - ຖາມວ່າທັງສອງບ່ອນລາວໄດ້ເຂົ້າທັງໝົດເທົ່າໃດ ?



## ບົດເລກປໍ 3

1. ຕູ້ສອນລາວໄດ້ເຮັດນາສອງລະດູຄື: ນາແຊງ ແລະນາປີ, ໃນປີນັ້ນລາວໄດ້ເຂົ້າທັງໝົດ 3000 kg (ກິໂລກຼາມ).
   - ຮູ້ວ່ານາແຊງໄດ້ໜ້ອຍກວ່ານາປີ 780 kg
   - ຖາມວ່ານາປີໄດ້ເຂົ້າເທົ່າໃດ ?.

## ບົດເລກປໍ 4

1. ຕູ້ບຸນມີ, ມີນາຕອນໜຶ່ງເປັນຮູບສີ່ແຈສາກ, ລວງກ້ວາງແທກໄດ້ 500 ແມັດແລະລວງຍາວແທກໄດ້ 100ແມັດ. ຖາມວ່າເນື້ອທີ່ນາຂອງຕູ້ບຸນມີມີທັງໝົດເທົ່າໃດ ?
   - ຮູ້ວ່າໜຶ່ງຕາແມັດໄດ້ເຂົ້າ 3 kg(ກິໂລກຼາມ).
   - ຖາມວ່ານາຜືນນັ້ນໄດ້ເຂົ້າທັງໝົດເທົ່າໃດ ?.

## ບົດເລກປ໌ 5 .

1. ລຸງທິດນາມີດິນຕອນໜຶ່ງເປັນຮູບສີ່ແຈສາກລວງຍາວແທກໄດ້ 150 ແມັດ, ລວງກ້ວາງແທກໄດ້ 60 ແມັດ, ເພິ່ນໄດ້ປູກເຂົ້າໃສ່ດິນຕອນນັ້ນຜົນໄດ້ຮັບຮູ້ວ່າໜຶ່ງຕາແມັດໄດ້ເກັບກູ້ເຂົ້າປູກໄດ້ 3 kg.

ລາວເອົາເຂົ້າດັ່ງກ່າວມານັ້ນມາຂາຍເປັນເຂົ້າສານ, ຮູ້ວ່າ 100kgຂອງເຂົ້າເປືອກນາສີໄດ້ເຂົ້າສານ 60 kg, ລາວຂາຍເຂົ້າເປັນໝື່ນ, ໝື່ນໜຶ່ງ 46.000ກີບ.

- ຖາມວ່າເນື້ອທີ່ຂອງດິນຕອນນັ້ນມີເທົ່າໃດ ?.
- ຜົນເກັບກ່ຽວເຂົ້າທັງໝົດມີເທົ່າໃດ?.
- ລາວໄດ້ເຂົ້າສານຈັກກິໂລກຣາມ ? .
- ລາວຂາຍເຂົ້າທັງໝົດໄດ້ເງິນເທົ່າໃດ?.



## ກາບ: ປູກເຂົ້ານາປີ

ພໍຮອດຍາມ ປູກເຂົ້ານາປີ
ເພິ່ນໄດ້ມີ ຂະບວນຟືດຟື້ນ
ພ້ອມກັນຕື່ນ ຮ່ວມທໍ່ແຮງໃຈ
ພ້ອມກັນໄຖ ຄາດນາຕາກ້າ
ລຸງແລະປ້າ ພໍ່ແມ່ລູກຫລານ
ບໍ່ໄດ້ຄ້ານ ເຮັດນາປູກເຂົ້າ
ພາກັນເຕົ້າ ຮ່ວມໃຈໂຮມທໍ່
ມ່ວນກະດີ້ ເຮັດວຽກແຂ່ງຂັນ
ໄດ້ແລ້ວປັນ ຍາດພິງພີ່ນ້ອງ
ເຮົາບໍ່ຕ້ອງ ເສຍເງິນຊື້ເຂົ້າ
ມີເຕັມເລົ້າ ເຫລືອໃຊ້ແລ້ວຂາຍ
ຢູ່ສະບາຍ ພໍພຽງລາຍໄດ້
ສຸດຊື່ນໃຈ ເມື່ອໄດ້ປູກເຂົ້າ



## ເຊີ້ງ: ມາເຮັດນາປີ

ໂຮ......................ຮິ້ວ ( 3 )
ເອົາມາເຮົາມາ  ມາຮ່ວມໃຈກັນ
ອອກແຮງແຂ່ງຂັນ  ເຮັດນາປູກເຂົ້າ
ຮີບມາເດີເຈົ້າ  ຊາວໜຸ່ມແມ່ຍິງ
ຢ່າໄດ້ເອື່ອຍອີງ  ແບບຄົນຂີ້ຄ້ານ
ມາຊ່ວຍວຽກງານ  ຄາດໄຖຊ່ວຍນ້ອງ
ພ້ອມທັງເພື່ອນພ້ອງ  ທັງໃກ້ແລະໄກ
ຮ່ວມແຮງຮ່ວມໃຈ  ຊ່ວຍກັນຫລົກກ້າ
ແລ້ວມາດຳນາ  ໃຫ້ເປັນຖັນແຖວ
ເມື່ອດຳນາແລ້ວ  ໃຫ້ໝັ່ນຮັກສາ
ສອງເດືອນຕໍ່ມາ  ກຽມຕົວກ່ຽວເຂົ້າ
ມາຮ່ວມກັບເຕົ້າ  ກ່ຽວເຂົ້ານາປີ
ຮ່ວມສາມັກຄີ  ວຽກງານຈຶ່ງແລ້ວ ( 2 )
ໂຮ........................ຮິ້ວ ( 3 )



# ເພງ: " ຝົນເອີຍ "

ϟ ຝົນເອີຍ ຝົນຕົກລົງມາ
ຊາວໄຮ່ຊາວນາ ພາກັນຟົດຟື້ນ
ຕື່ນເຊົ້າຕື່ນ ປົ່ງໃບຂຽວງາມ
ທຸກບ່ອນກໍງາມ ຊື່ນໃຈຊື່ນໃຈ
ϟ ຝົນເອີຍ ຂໍໃຫ້ຕົກມາ
ພວກເຮົາຫວ່ານກ້າ ດຳນາຫ້າວຫັນ
ທຸກພາກສ່ວນ ໃຫ້ມາຮ່ວມກັນ
ລ້າງສາຍສຳພັນ ສາມັກຄີເຮັດນາ



## ເກມ: " ແຂ່ງຂັນນັບເມັດເຂົ້າ "

ຈຸດປະສົງ: ເພື່ອເຝິກແອບເດັກໃນການນັບ ແລະ ມີພື້ນຖານໃນການບວກ

ອຸປະກອນ: ເມັດເຂົ້າ

ເວລາ: 30 ນາທີ

ບາດກ້າວດຳເນີນ:

1. ແບ່ງເດັກໃຫ້ເທົ່າກັນເປັນເທົ່າໃດກຸ່ມກໍໄດ້, ແຕ່ລະກຸ່ມບໍ່ໃຫ້ກາຍ 4 ຄົນ

2. ຄູເລີ່ມໃຫ້ນັກຮຽນນັບເມັດເຂົ້າໂດຍຕັ້ງເວລາຄື:

   - ຖ້າເປັນນັກຮຽນປີ 1 ໃຫ້ເວລາ 1 ນາທີ
   -     - " -    ປີ 2    "    2 ນາທີ
   -     - " -    ປີ 3    - " – 3 ນາທີ
   -     - " -    ປີ 4    - " – 4 ນາທີ
   -     - " -    ປີ 5    - " – 5 ນາທີ

3. ຖ້າໝົດເວລາຄູຈະໃຫ້ນັກຮຽນແຕ່ລະກຸ່ມບອກຈຳນວນຂອງແຕ່ລະຄົນ

4. ໃຫ້ຕາງໜ້ານັກຮຽນແຕ່ລະກຸ່ມຂຶ້ນບອກ

5. ເມື່ອຮູ້ຜົນບອກແລ້ວຄູສະຫລຸບກຸ່ມທີ່ຊະນະເລີດ